# ຕັ້ງແມ່ພິມເຂົ້າໃສ່ລະບົບຄອມພິວເຕີ (ອັກສອນ)

# HOW TO INSTALL THE LAO FONTS

ໂດຍ ຄຳແພວ ພູເພັຊຣ໌ລິນທອງ Par Khamphéo Phouphetlinthong

You have to know how to create a directory on your computer with the Windows Explorer and also to know how to go there, on your directory.

It's better to gather all of your Lao fonts into the same directory. You also put the dowloaded Lao font into this same directory but try to remember the name of your created folder on the disk C:/ or the disk D:/ in order to make easier the search (C:/Laofont D:/laofonts).

About creating a folder or a directory, just follow the procedure from step 1 to step 3 below.

ກ່ອນອື່ນຫມົດ ທ່ານຕ້ອງຮູ້ຈັກສ້າງເຫງົ້າ(répertoire) ດ້ວຍ Explorer Windows ເສັຽກ່ອນຈະເປັນການດີ ແລະ ທ່ານຕ້ອງຮູ້ຈັກຊອກຫາເຫງົ້າດັ່ງກ່າວຕາມຄວາມຕ້ອງການໄດ້ເຫມືອນກັນ ອີກປະການນຶ່ງ ທ່ານຄວນວາງແມ່ພິມລາວທຸກໆອັນໄວ້ເຫງົ້າບ່ອນດຽວກັນ

ໃນເມື່ອທ່ານສ້າງເຫງົ້າຂຶ້ນມາແລ້ວ ທ່ານຄວນຈຳຊື່ ຫລື ຈື່ຊື່ ແລະ ຈົດຊື່ຂອງມັນໄວ້ໃຫ້ດີ ເພື່ອຄວາມສະດວກໃນການຊອກໃນພາຍຫນ້າ

ວິທີເຮັດໃຫ້ Explorer Windows ເປີດຂຶ້ນມາໄດ້ນັ້ນ ໃຫ້ເຮັດຕາມຂໍ້ນຶ່ງຫາຂໍ້ສາມຂ້າງລຸ່ມນີ້

ເມື່ອວັນທີ ໐໒-໐໕-໒໐໐໗ ເດືອນ ພຶສພາ ພ.ສ. ໒໕໕໐ ແຫ່ງເມືອງ ປາຣີສ໌ ທີ່ປະເທດຝຣັ່ງ

| ວິທີເອົາແມ່ພິມເຂົ້າໃສ່ລະບົບວິນໂດວ | INSTALL THE FONTS ON WINDOWS |
|---|---|
| ໑- ດັກໃສ່ Start ແຈລຸ່ມກ້ຳຊ້າຍ | 1- Point to **Start** at the left inférior corner |
| ໒- ດິກໃສ່ຫົວຫນູເບື້ອງຂວາ | 2- Click on the right button of the mouse |
| ໓- ດິກໃສ່ Explorer (ຈະມີຫນ້າຕ່າງເປີດຂຶ້ນ) | 3- Click on **Explorer** (an interface opens) |
| ໔- ດຶງບັນໄດເລື່ອນກ້ຳຊ້າຍລົງລຸ່ມສຸດ | 4- Bring the left lift at the bottom |
| ໕- ດິກໃສ່ Panneau de configuration | 5- Click on the **Panel control...** |
| ໖- ດິກໃສ່ Fonts | 6- Click on **Fonts** |
| ໗- ດິກໃສ່ File ຢູ່ແຈເທິງກ້ຳຊ້າຍຂອງຫນ້າຕ່າງ | 7- Click on **File** at the superior left corner |

# ຕັ້ງແມ່ພິມເຂົ້າໃສ່ຣະບົບຄອມພິວເຕີ (ອັກສອນ)

| | |
|---|---|
| ໗- ດິກໃສ່ Install new font... | 8- Click on **Install a new font...** |
| ໘- ໃຫ້ຊອກຫາເຫງົ້າທີ່ທ່ານວາງແມ່ພິມໄວ້ | 9- Find the folder where are your Lao fonts |
| ໑໐-ໃຫ້ເລືອກເອົາແມ່ພິມທີ່ທ່ານຕ້ອງການຕິດຕັ້ງ | 10- Select some of desired fonts |
| ໑໑-ດິກໃສ່ **OK** | 11- Click on the button **OK** |
| ໑໒-ດິກໃສ່ດຸມ **Close** ເພື່ອປິດໜ້າຕ່າງຂອງມັນ | 12- Click on the button **Close** |
| ໑໓-ໃຫ້ມອດຄອມພິວເຕີແລ້ວເປີດໃຫມ່ (ກໍໃຊ້ໄດ້) | 13- Reboot or restart your computer |

http://laocom.free.fr

## ເລຂສັບ (Lexiques)

ຂ້າພະເຈົ້າໄດ້ແປຄຳສັບຫລາຍໆຄຳທີ່ມະຈາກເທັກໂນໂລຈີໃຫມ່ ໃຫ້ເປັນພາສາລາວ ແຕ່ບໍ່ໄດ້ຫມາຍຄວາມວ່າໃຫ້ຜູ້ອື່ນຖືເອົາເປັນຫລັກແຕ່ປະການໃດ ຈະຜິດຫລືຖືກກໍຂໍໃຫ້ທ່ານນຳຄິດໃຊ້ຕາມເຫມະສົມ ເພາະວ່າ ສັບເຫລົ່ານີ້ບໍ່ເຄີຍໄດ້ໃຊ້ໃນດ້ານນີ້ມາກ່ອນ ຂ້າພະເຈົ້າເຂົ້າຈຶ່ງໄດ້ພຍາຍາມ ແປສັບທີ່ຂ້າພະເຈົ້າເຂົ້າໃຈຄວາມຫມາຍຂອງມັນໄດ້ດີອອກມາ ເພື່ອໃຫ້ພວກເກີດໃຫມ່ໃຫຍ່ລຸນສາມາດເກັບກຳແລະນຳເອົາຂໍ້ມູນຕ່າງໆເຫລົ່ານີ້ໄປພິຈຣະນາໃນອະນາຄົດຂ້າງຫນ້າ ສະນັ້ນ ການຂຽນຫຸກໆຊນິດອັນປະກອບດ້ວຍການອະທິບາຍຄວາມຫມາຍຄຳສັບຕ່າງໆພ້ອມດ້ວຍການວິເຄາະບາງຢ່າງ ຈະເປັນປໂຍດອັນມະຫາສານສຳລັບສັງຄົມໄທລາວໂດຍທົ່ວໄປ (ມີ ຄຳນີ້ຈະຖືກໃຊ້ຢູ່ຕລອດ)

ດິກ ກ. To click. Cliquer. ດິກເປັນຄຳມູນ ຄຳມູນແມ່ນຄຳລາວແທ້ທີ່ມີແຕ່ພຍາງດຽວເທົ່ານັ້ນ ຕົວຢ່າງ ຕາຍດິກນ້ຳ ດິກລົງນ້ຳ ແມ່ນອາການທີ່ຕ່າວລົງໄປລຸ່ມ ລົງໄປພື້ນ ລົງໄປໃຕ້ນ້ຳ ເພິ່ນຮ້ອງວ່າ ດິກ

ດັກ ກ. (ມ.) To point. Se pointer, pointer quelque chose, maintenir quelque chose enfoncée. ເນັ້ນໄວ້ ເຊັ່ນ ດັກແຮ້ວ ອັນມີຄວາມຫມາຍວ່າ ທ້າງແຮ້ວ ຄຳວ່າດັກມີຄວາມຫມາຍຫລາຍຢ່າງ ແຕ່ວ່າຂ້າພະເຈົ້າຂໍໂຈະໄວ້ພຽງເທົ່ານີ້ [(ມ.) ບົ່ງບອກວ່າແມ່ນຄຳມູນ]

ດົ່ງ ກ. (ມ.) To link. Lier dans le sens de lien. ເນັ່ງສາຍ ແມ່ນເອົາເຊືອກມາເນັ່ງ ແຕ່ວ່າ ດົ່ງ ແມ່ນເນັ່ງສາຍໂດຍບໍ່ຈຳເປັນຈະໃຊ້ເຊືອກ ເນັ່ງໃນຫົວ ໃນຄວາມຄິດ ອັນມີຄວາມຫມາຍເຫມາະສົມກັບຄຳຝຣັ່ງອັງກິດວ່າ link ກັບ lien ທີ່ເພິ່ນໃຊ້ກັນໃນເວັບໄຊຕ໌ທຸກວັນນີ້ ຕົວຢ່າງ ດົ່ງໄປໃສ່ ແປວ່າ ແນໄປໃສ່ ແລະ ຫມາກໂຕ້ນດົ່ງ ແມ່ນຂີ້ກົ່ວທີ່ເພິ່ນໃຊ້ວັດແທກ ຄວາມຕຣົງຊື່ຈັດ ຄວາມເລິກ ແຕ່ເປັນຄວາມທ່ຽງທາງເລິກຫລາຍກວ່າ (ຝຣັ່ງອັງກິດວ່າ aplomb) ກ່ອນຈະກໍ່ຝາເຮືອນເພິ່ນວາງຫມາກໂຕ້ນດົ່ງໄວ້ກ່ອນ ເພິ່ນຈຶ່ງກໍ່ເພື່ອໃຫ້ຝາຊື່ດີ [(ມ.) ບົ່ງບອກວ່າແມ່ນຄຳມູນ]

ຄຳແພວ ພູເພັຊຣ໌ລິນທອງ Khamphéo Phouphetlinthong